# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 20 ກໍຣະກະດາ 2008 ( 07-20-2008 )

## ແມ່ນຫຍັງຈະເກີດຂື້ນເມື່ອພຣະຄຣິດສະເດັດມາ:

**ຂໍ້ພຣະຄັມພີໃນບົດຣຽນ:** (ພຣະນິມິດ 19:6-9, 11-16, 19-21)

**ຄຳຖາມແຫ່ງຊີວິດ:** ພຣະເຢຊູຈະເຮັດຫຍັງແດ່ເມື່ອພຣະອົງສະເດັດກັບມາ?

**ພຣະຄັມພີແຫ່ງຄວາມຈິງ:** ເມື່ອພຣະຄຣິດສະເດັດກັບມາ, ພຣະອົງຈະກອບກູ້ເອົາໄພ່ພົນຂອງພຣະອົງ, ທຳລາຍໂລກ ແລະລ້າງຜານພວກທີ່ຕໍ່ສູ້ພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ອຍທ່ານໃຫ້ດຳເນີນຊີວິດໃຫ້ເຖິງທີ່ສຸດດ້ວຍການລະວັງໂດຍ:

- ການຈົດຈຳວ່າແມ່ນຫຍັງພຣະຄຣິດຈະເຮັດໃຫ້ສຳເຣັດໃນເມື່ອພຣະອົງສະເດັດກັບມາ; ແລະ
- ໃຫ້ເລືອກເອົາການດຳຣົງຊີວິດດ້ວຍຄວາມສລາດຂອງຊັຍຊະນະທີ່ປຸກໃຈທ່ານນຶກເຖິງການສະເດັດກັບມາຂອງພຣະເຢຊູຄຣິດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຣຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຣຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ແນະນຳໃຫ້ນັກຮຽນຢູ່ໃນ "**ໃນການດຳເນີນຊີວິດດ້ວຍການລະມັດລະວັງຈົນວັນສຸດທ້າຍ**"
- ອ່ານຂໍ້ໃຫຍ່ໃຈຄວາມຂອງບົດຮຽນນີ້: ແມ່ນຫຍັງທີ່ຈະມາພ້ອມກັບພຣະຄຣິດໃນການສະເດັດລົງມາຂອງພຣະອົງ?. ເຊີນຊວນໃຫ້ນັກຮຽນຕອບສນອງຕໍ່ຄຳຖາມຕ່າງໆ. ເນັ້ນໜັກເຖິງບົດຮຽນນີ້ຊຶ່ງເປັນ
- ການຂຽນຂື້ນມາເພື່ອໃຫ້ຄຣິສຕຽນມີອຳນາດໃນການດຳຣົງຊີວິດປະຈຳວັນຢ່າງມີຊັຍຊະນະ ເພາະ
- ວ່າການສະເດັດກັບມາຂອງພຣະຄຣິດເປັນການສຳຄັນທີ່ສຸດ.

## 1. <u>ທອງເອົາຄືນ:</u> (ພຣະນິມິດ 19:6-9)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ພຣະນິມິດ 19:6-9
- ຊີ້ໃຫ້ເຫັນຄວາມຈຳເປັນໃນຂໍ້ທີ 7 ແລະໃຫ້ນັກຮຽນຂີດກ້ອງຄຳດັ່ງນີ້: ໃຫ້ພວກເຮົາດີໃຈ, ມີຄວາມຊື່ນຊົມຍິນດີ ແລະ ໃຫ້ກຽດແດ່ພຣະອົງ "ໃນບົດຮຽນຂອງເຮົາເຈົ້າ.
- ໃຊ້ໂອກາດສຳລັບສິ່ງທີ່ພວກເຮົາສົ່ງ ຫລືໄດ້ຮັບບັດເຊີນໃສ່ໃນກະດານວ່າແຕ່ລະຄົນມີປະສົບການແນວໃດແດ່. ແລ້ວຖາມວ່າ: ມັນໄດ້ເຮັດໃຫ້ທ່ານມີຄວາມຮູ້ສຶກຢ່າງໃດ ໃນເວລາທີ່ທ່ານໄດ້ຮັບບັດເຊີນໃຫ້ໄປເປັນຜູ້ສຳຄັນ, ທັງເປັນຜູ້ຮ່ວມພິເສດໃນງານແຕ່ງງານ?
- ວາດພາບເບິ່ງບັດເຊີນງານແຕ່ງງານຂອງເຈົ້າສາວຂອງພຣະຄຣິດ (ຈັດຕຽມ ບັດເຊີນ ຫລືໄດ້ຊື້ມາດ້ວຍຣາຄາແພງເພື່ອສຳລັບງານແຕ່ງງານຕາມທີ່ປະກາດໄປນັ້ນ). ອະທິບາຍ: ນັ້ນແຫລະທີ່ພວກເຮົາກຳລັງເປັນພຍານຢູ່ໃນທຸກມື້ນີ້.
- ບົດຮຽນ ການຈັດຕຽມການແຕ່ງງານຂອງແກະນ້ອຍຂອງພຣະເຈົ້າ! ພຣະຄຳເຫລົ່ານີ້ໄດ້ບັນລະຍາຍເຖິງການສະເດັດກັບມາຂອງພຣະຄຣິດເພື່ອຮັບເອົາບັນດາຜູ້ທີ່ເຊື່ອທັງຫລາຍ. ໃຜຈະຮັບເອົາການແຕ່ງງານນີ້? ການແຕ່ງງານນີ້ຈະຈັດຢູ່ທີ່ໃດ? ການແຕ່ງງານນີ້ຈະເປັນຢ່າງໃດ?.
- ໃຫ້ນັກຮຽນອ່ານພຣະນິມິດຂໍ້ທີ 8 ນາງຈະໄດ້ເປັນຜູ້ນຸ່ງຜ້າປ່ານເນື້ອລະອຽດ ເຫລື້ອມໃສດີ. ຜ້າປ່ານເນື້ອລະອຽດໝາຍເຖິງຄວາມຊອບທັມ ແລະການກະທຳຢ່າງໃຈກວ້າງຂວາງ.
- ຄຳຖາມ: ພວກເຮົາຈະຈັດຕຽມເຄື່ອງແຕ່ງກາຍສຳລັບການໄປຮ່ວມງານແຕ່ງງານແບບໃດ?
- ໃຫ້ນັກຮຽນຂຽນ ບັດເຊີນໄປຮ່ວມງານແຕ່ງງານດ້ວຍຂໍ້ຄວາມນີ້: ຂຽນຊື່ຕົນເອງໃສ່ກ່ອນ ແລ້ວຂຽນ= "**ທ່ານເປັນຜູ້ທີ່ໄດ້ຮັບເຊີນໃຫ້ມາຮ່ວມໃນງານແຕ່ງງານ**" ແລ້ວເອົາໄປຕິດໄວ້ບ່ອນທີ່ເຫັນໄດ້ງ່າຍ, ເຊັ່ນປະຕູທາງອອກ, ຕູ້ເຢັນ, ປະທ້ອງນອນ ແລະອື່ນໆ ທີ່ທ່ານສາມາເຫັນທຸກວັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 19:6-9)

1. ທ່ານຈະສາມາດຮຽກຮ້ອງໃຫ້ທຸກຊີວິດທີ່ທ່ານຕ້ອງການຢາກຮ້ອງວ່າ: "ອາເລລູຢາບໍ່"? ຢູ່ໃນພຣະທັມໂຢຮັນຕອນທີ່ຍັງບໍ່ໄດ້ເຫັນເທື່ອນັ້ນ ເປັນດ້ວຍເຫດໃດລາວຈຶ່ງສາມາດພັນລະນາເຖິງສຽງສັຣເສີນພຣະເຈົ້າໄດ້?
2. ຍ້ອນເຫດຜົນອັນໃດທີ່ພາໃຫ້ໂຢຮັນຮ້ອງ "ອາເລລູຢາ" ໄດ້? ທ່ານຈະສະແດງຄວາມຮູ້ສຶກຂອງທ່ານເພື່ອພຣະເຈົ້າໄດ້ບໍ່ວ່າພຣະອົງເປັນໃຜ? ພຣະອົງໄດ້ເຮັດຫຍັງແດ່? ພຣະອົງຈະເຮັດຫຍັງ?
3. ຖ້າຫາກບັນດາຜູ້ທີ່ເຊື່ອຂອງພວກເຮົາຕັດສິນໃຈແຕ່ງງານ ມີຫຍັງແດ່ທີ່ພວກເຮົາຈະເອົາມາແຕ່ງເພື່ອເປັນເຈົ້າສາວຂອງພຣະຄຣິດ, ທ່ານຈະເຮັດໃຫ້ທ່ານເປັນຄົນບໍຣິສຸດ ແລະສະງ່າງາມໄດ້ຢ່າງໃດ?

## 2. <u>ໄດ້ຊັຍຊະນະ:</u> (ພຣະນິມິດ 19:11-16)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 19:11-16
- ໃຫ້ຂຽນຫົວຂໍ້ເຫລົ່ານີ້ໃສ່ກະດານ: "ເຊື່ອສຸດຈິດສຸດໃຈ ແລະແນ່ນອນ; ພຣະຄຳຂອງພຣະເຈົ້າ; ກະສັດເໜືອກະສັດທັງປວງ; ແລະ ພຣະເຈົ້າເໜືອພຣະທັງປວງ.
- ໃນຫົວຂໍ້ຕ່າງໆ ເຫລົ່ານີ້ໄດ້ເປີດເຜີຍເຣື່ອງທີ່ພຣະເຢຊູຈະກະທຳໃນເມື່ອພຣະອົງສະເດັດກັບມາ.
- ອະທິບາຍ: ໃນຂໍ້ພຣະທັມຕ່າງໆເຫລົ່ານີ້ ໂຢຮັນໄດ້ພັນລະນາ ຄວາມໝາຍຂອງການສະເດັດກັບມາຂອງພຣະ

- ຄຣິດໃຫ້ຜູ້ທີ່ກຽດຊັງ ແລະບໍ່ຍອມຮັບພຣະເຢຊູ ມີສອງສິ່ງທີ່ສຳຄັນທີ່ພຣະເຢຊູຈະຕ້ອງທຳຄື: ທຳສົງຄາມ ແລະພິພາກສາຕັດສິນ.
- ຄຳຖາມ: ບັນດາຜູ້ທີ່ເຊື່ອຈະເຮັດແນວໃດ ເພື່ອປະກາດວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ? ພວກເຮົາ ພວກເຮົາຈະວົນວາຍຢູ່ຢ່າງສັບສົນ ຫລືຈະຢູ່ເພື່ອໄດ້ຮັບຊັຍຊະນະດ້ວຍກັນກັບພຣະຄຣິດ? ພວເຮົາຄວນຈະເວົ້າຄຳໃດ? ພວກເຮົາຄວນຈະທຳເປັນແບບຢ່າງແນວໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 19:11-16

1. ຂໍ້ຄວາມອັນໃດທີ່ໄດ້ຊົງປະທານໃຫ້ຜູ້ທີ່ຂີ່ມ້າຂາວນັ້ນ? ຈະເປັນຄວາມຈິງຕາມພຣະທັມເຫລົ່ານີ້ທີ່ກ່າວໄວ້ວ່າ ພຣະເຢຊູຈະສະເດັດກັບມາແທ້ຫລື ມີຫລັກຖານສຳຄັນອັນໃດແດ່ທີ່ຢັ້ງຢືນໄດ້?
2. ທ່ານຈະປຽບທຽບໃຫ້ເຫັນຄວາມແຕກຕ່າງຂອງການທີ່ພຣະເຢຊູໄດ້ຊົງສະເດັດມາຄັ້ງທຳອິດນັ້ນຢ່າງໃດ? ຕາມນິມິດເຫັນຂອງໂຢຮັນວ່າພຣະເຢຊູຈະສະເດັດກັບມານັ້ນວ່າເປັນຢ່າງໃດ? (ແກະ; ສິງ)
3. ໃນຂໍ້ທີ 15, ແມ່ນໃຜເປັນຜູ້ໄດ້ຊັຍຊະນະ? ທ່ານເປັນຜູ້ທີ່ເໝາະສົມຢູ່ທີ່ໃດໃນພາບພົດນີ້? ທ່ານໄດ້ຕິດຕາມພຣະເຢຊູ ຫລືເປັນຜູ້ຄັດຄ້ານພຣະອົງ? ໃນຊີວິດຂອງທ່ານໄດ້ສະແດງວ່າພຣະເຢຊູເປັນພຣະຜູ້ເປັນເຈົ້າຢ່າງໃດ?

### 3. <u>ການທຳລາຍ:</u> (ພຣະນິມິດ 19:19-21)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 19:19-21
  ອະທິບາຍ: ນີ້ເປັນຄັ້ງສຸດທ້າຍ ແລະສລຸບເປີດເຜີຍຂອງການດີ ແລະການຊົ່ວຮ້າຍ. ຖາມນັກຮຽນວ່າ: ແມ່ນຫຍັງທີ່ພຣະເຈົ້າໄດ້ແກ້ໄຂສຳລັບຄວາມຊົ່ວຮ້າຍ? (ໄມ້ກາງແຂນຂອງພຣະເຢຊູ) ແມ່ນຫຍັງທີ່ພຣະເຈົ້າໄດ້ຊັຍຊະນະເໜືອສິ່ງຊົ່ວຮ້າຍ? (ການຄືນມາຈາກຕາຍຂອງພຣະເຢຊູ) ໃນຄາວສິ້ນສຸດໂລກ ແມ່ນໃຜຈະຖືກທຳລາຍ? (ສັດຮ້າຍຈາກທະເລ ແລະຜູ້ເຜີຍພຣະວັຈນະປອມ)

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 19:19-21)

1. ທ່ານຈະພັລນາເຫດຜົນໃນພຣະທັມພຣະນິມິດ 19:19-21 ແນວໃດ? ທ່ານໄດ້ເຫັນວ່າທ່ານເອງໄດ້ຢູ່ບ່ອນໃດ ໃນພາບນີ້?
2. ທ່ານເຄີຍໄດ້ຕ້ອງການໃຫ້ພຣະເຈົ້າໃຫ້ຄວາມເຂັ້ມແຂງເພື່ອຕໍ່ສູ້ກັບການຫລອກລວງ ຂົ່ມເຫງຂອງມານຊາຕານບໍ່? ຖ້າບໍ່ເຄີຍຂໍໃຫ້ທ່ານອະທິຖານອ້ອນວອນທູນຂໍນຳພຣະເຈົ້າສາແຕ່ວັນນີ້ເປັນຕົ້ນໄປ.

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະຄຣິດຈະນຳເອົາທຸກສິ່ງທີ່ພຣະອົງໄດ້ສັນຍາໄວ້ມາໃຫ້ໄພ່ພົນຂອງພຣະອົງຢ່າງຄົບບໍຣິບູນ.
- ຣິດອຳນາດອັນຍິ່ງໃຫຍ່ຂອງມານທີ່ມີທັງໝົດບໍ່ເທົ່າທຽມຣິດທານຸພາບຂອງພຣະຄຣິດໄດ້ເລີຍ.
- ນະຣົກມີຈິງ ເປັນສະຖານທີ່ລົງໂທດສຳລັບຜູ້ທີ່ຊົ່ວຮ້າຍອັນຕລອດໄປເປັນນິດ.
- ພວກເຮົາໄດ້ຈັດຕຽມໄວ້ສຳລັບພຣະຄຣິດກັບມາດ້ວຍການມີຊີວິດຢູ່ໂດຍຄວາມຊອບທັມ ກິຈການ.

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org. by JH